# ຫຼັກຮັບສັນຍານອັງແຕນ ແລະໂທລະພາບດິຈິຕອນ

**FCC**
**ຂໍ້ເທັດຈິງສຳລັບຜູ້ຊົມໃຊ້**

ກົດໝາຍລັດຖະບານກາງໄດ້ກຳນົດໃຫ້ ທຸກໆສະຖານີໂທລະພາບທີ່ອອກອາກາດເຕັມກຳລັງຢຸດເຊົາການອອກອາກາດໂທລະພາບໃນຮູບແບບຄື້ນທຳມະດາແອນາລອັກ (analog) ແລະ ປ່ຽນເປັນການອອກອາກາດແບບລະບົບດິຈິຕອນແທນຫຼັງຈາກວັນທີ 17 ກຸມພາ ປີ 2009. ປະຈຸບັນ ບັນດາສະຖານີອອກອາກາດໃນທຸກໆຕະຫຼາດສະຫະລັດກຳລັງອອກອາກາດທັງໃນລະບົບຄື້ນທຳມະດາແອນາລອັກ ແລະ ລະບົບດິຈິຕອນ. ຖ້າທ່ານມີໂທລະພາບແອນາລອັກແບບເກົ່າທີ່ຮັບຊົມລາຍການອອກອາກາດຜ່ານທາງຄື້ນອາກາດໂດຍບໍ່ເສຍຄ່າ ເຊິ່ງໃຊ້ກັບຫຼັກອັງແຕນຢູ່ນອກເຮືອນ ຫຼື ເສົາຮັບສັນຍານ "ຫູກະຕ່າຍ" ທີ່ຕິດກັບໜ່ວຍໂທລະພາບ, ເພື່ອສາມາດສືບຕໍ່ໄດ້ຮັບຊົມລາຍການອອກອາກາດຕ່າງໆຈາກສະຖານີອອກອາກາດເຕັມກຳລັງສົ່ງ ທ່ານຈຳເປັນຕ້ອງມີໂທລະພາບດິຈິຕອນ (ໂທລະພາບທີ່ມີເຄື່ອງຮັບສັນຍານດິຈິຕອນຕິດຕັ້ງຢູ່ພາຍໃນຕົວເຄື່ອງ) ຫຼື ໂທລະພາບແອນາລອັກແບບເກົ່າແຕ່ເຊື່ອມຕໍ່ກັບ "ເຄື່ອງປ່ຽນສັນຍານພາບດິຈິຕອນເປັນພາບແອນາລອັກແບບຄື້ນທຳມະດາ" (ເຊິ່ງອຸປະກອນນີ້ ທຳໜ້າທີ່ປ່ຽນສັນຍານພາບດິຈິຕອນເປັນສັນຍານພາບທຳມະດາ ເພື່ອເຮັດໃຫ້ໂທລະພາບແອນາລອັກແບບເກົ່າສາມາເບິ່ງໄດ້). ໃບຂໍ້ມູນຄວາມຈິງນີ້ສະໜອງຂໍ້ມູນກ່ຽວກັບຫຼັກຮັບສັນຍານອັງແຕນ ແລະກ່ຽວກັບສິ່ງທີ່ຕ້ອງການເພື່ອໃຫ້ສາມາດຮັບສັນຍານພາບດິຈິຕອນໄດ້ຢ່າງມີຄຸນນະພາບດີ.

## <u>ທຳອິດ ລອງໃຊ້ຫຼັກຮັບສັນຍານອັງແຕນທີ່ມີຢູ່ຂອງທ່ານ</u>

ທຳອິດ, ມັນມີຄວາມສຳຄັນໃນການຮູ້ວ່າ ຖ້າໂທລະພາບຂອງທ່ານໃນປະຈຸບັນສາມາດຮັບສັນຍານພາບຢ່າງມີຄຸນນະພາບດີໃນຊ້ອງ 2-51 ດ້ວຍຫຼັກຮັບສັນຍານອັງແຕນ, ໂທລະພາບດັ່ງກ່າວກໍ່ຄວນຈະສາມາດຮັບສັນຍານໂທລະພາບດິຈິຕອນ (DTV) ໄດ້ເຊັ່ນກັນ, ລວມທັງພາບອອກອາກາດທີ່ມີຄວາມຄົມຊັດສູງ (HDTV), ດ້ວຍຫຼັກສັນຍານອັງແຕນອັນດຽວກັນ. ໃນກໍລະນີນີ້ ທ່ານບໍ່ຈຳເປັນຕ້ອງຊື້ "ເຄື່ອງຮັບສັນຍານພາບດິຈິຕອນ" ຫຼື "ເຄື່ອງຮັບສັນຍານພາບຄວາມຄົມຊັດສູງ" ເພື່ອສາມາດຮັບຊົມສັນຍານໂທລະພາບດິຈິຕອນ ຫຼື ພາບຄວາມຄົມຊັດສູງ. ແນວໃດກໍ່ຕາມ, ຜູ້ຊົມໃຊ້ຄວນຮູ້ວ່າຖ້າເຂົາເຈົ້າໃຊ້ອຸປະກອນປ່ຽນສັນຍານພາບດິຈິຕອນເປັນສັນຍານພາບແອນາລອັກທຳມະດາ, ເຂົາເຈົ້າກໍ່ຍັງຈະຕ້ອງການໃຊ້ຫຼັກອັງແຕນເພື່ອຮັບສັນຍານພາບດິຈິຕອນ.

ກ່ອນທີ່ຈະດຳເນີນການປ່ຽນແປງຕໍ່ກັບຫຼັກອັງແຕນ ຫຼື ລະບົບຮັບສັນຍານອັງແຕນຂອງທ່ານທີ່ມີຢູ່, ທ່ານຄວນກວດເບິ່ງວ່າມັນຈະສາມາດຮັບສັນຍານພາບດິຈິຕອນທີ່ອອກອາກາດໃນເຂດພື້ນທີ່ຂອງທ່ານໄດ້ຫຼືບໍ່. ເຊື່ອມຕໍ່ຫຼັກອັງແຕນຂອງທ່ານທີ່ມີຢູ່ເຂົ້າກັບໂທລະພາບດິຈິຕອນ ຫຼື ເຄື່ອງປ່ຽນສັນຍານພາບດິຈິຕອນເປັນສັນຍານພາບທຳມະດາທີ່ເຊື່ອມຕໍ່ກັບໂທລະພາບແບບເກົ່າ. ຮັບປະກັນວ່າໂທລະພາບຂອງທ່ານໄດ້ຕັ້ງຄ່າໃຫ້ຮັບສັນຍານພາບອອກອາກາດຜ່ານຄື້ນອາກາດ (ເຊິ່ງບໍ່ແມ່ນເຊື່ອມຕໍ່ກັບການບໍລິການໂທລະພາບແບບເສຍຄ່າເຊັ່ນວ່າບໍລິສັດໂທລະພາບແບບໃຊ້ສາຍ ຫຼື ຈານດາວທຽມ). ນອກນັ້ນການດຳເນີນການ "ກວດຫາຊ້ອງ," ກໍ່ຈະຊ່ວຍໄດ້ເຊັ່ນກັນ, ເຊິ່ງໂທລະພາບຂອງທ່ານຈະກວດເບິ່ງໂດຍອັດຕະໂນມັດວ່າມີສະຖານີໃດແດ່ທີ່ມັນສາມາດຮັບສັນຍານໄດ້. ໃນຫຼາຍໆກໍລະນີ, ນີ້ແມ່ນທັງໝົດທີ່ທ່ານຈະຕ້ອງເຮັດໃຫ້ທ່ານເພື່ອສາມາດຮັບຊົມການອອກອາກາດໂທລະພາບດິຈິຕອນ.

FCC
Federal Communications Commission ▪ Consumer & Governmental Affairs Bureau ▪ 445 12th St., SW ▪ Washington, DC 20554
1-888-CALL-FCC (1-888-225-5322) ▪ TTY: 1-888-TELL-FCC (1-888-835-5322) ▪ Fax: 1-866-418-0232 ▪ www.fcc.gov/cgb

<u>ສໍາລັບຄວາມຊ່ວຍເຫຼືອຕໍ່ກັບບັນຫາການຮັບສັນຍານ</u>

ຖ້າທ່ານປະສົບກັບບັນຫາໃນການຮັບສັນຍານພາບ, ບັນດາຂໍ້ມູນ ແລະເຄັດລັບຕໍ່ໄປນີ້ອາດຊ່ວຍປັບປຸງການຮັບສັນຍານພາບອອກອາກາດດີຈິຕອນ.

- ໃນໄລຍະທັນປ່ຽນເປັນໂທລະພາບດີຈິຕອນ, ສະຖານີຫຼາຍແຫ່ງກໍາລັງອອກອາກາດຊົ່ວຄາວໃນລະດັບກໍາລັງແຮງຫຼຸດຜ່ອນ. ຖ້າທ່ານບໍ່ໄດ້ຮັບສັນຍານຈາກສະຖານີໂທລະພາບດີຈິຕອນໃດໜຶ່ງ, ນີ້ກໍ່ບໍ່ໄດ້ໝາຍຄວາມວ່າຫູ້ກຮັບສັນຍານອັງແຕນ ຫຼືໂທລະພາບຂອງທ່ານມີບັນຫາສະເໝີໄປ. ໃຫ້ກວດເບິ່ງນໍາສະຖານີໂທລະພາບດັ່ງກ່າວເພື່ອຊອກຮູ້ວ່າເຂົາເຈົ້າກໍາລັງວາງແຜນປ່ຽນແປງການອອກອາກາດທີ່ຈະຊ່ວຍປັບປຸງການຮັບສັນຍານພາບແມ່ນຫຼືບໍ່.
- ເມື່ອສັນຍານໂທລະພາບແອນາລອັກແບບທໍາມະດາອ່ອນ ຫຼື ໄດ້ຮັບສັນຍານແຊກຊ້ອນ, ສຽງຊາດໆ, ພາບຍິບຍັບຄືຫິມະ, ແລະ ພາບບິດງໍ້ ມັກຈະປະກົດຂຶ້ນທີ່ໜ້າຈໍ, ແຕ່ທ່ານຍັງສາມາດເບິ່ງພາບຜ່ານສຽງລົບກວນນັ້ນໄດ້. ການສົ່ງສັນຍານພາບແບບດີຈິຕອນຈະໃຫ້ພາບທີ່ແຈ້ງດີ ເຖິງແມ່ນວ່າສັນຍານຈະອ່ອນ ແລະ ມີສັນຍານລົບກວນແຊກຊ້ອນກໍ່ຕາມ. ແນວໃດກໍ່ດີ, ຖ້າສັນຍານຕໍ່າກວ່າກໍາລັງສົ່ງຕໍ່າສຸດທີ່ກໍານົດໄວ້, ພາບຈະຫາຍໄປທັນທີ. "ຜົນກະທົບ" ແບບນີ້ໝາຍຄວາມວ່າ ຖ້າປົກກະຕິແລ້ວທ່ານເບິ່ງສະຖານີໂທລະພາບແບບທໍາມະດາ ທີ່ມີສຽງລົບກວນ ແລະ ພາບບິດງໍ້ບໍ່ແຈ້ງ, ທ່ານອາດຈະຈໍາເປັນຕ້ອງປັບປ່ຽນ ຫຼື ຍົກລະດັບລະບົບຮັບສັນຍານອັງແຕນຂອງທ່ານເພື່ອໃຫ້ໄດ້ຮັບສັນຍານທີ່ດີຢ່າງໝັ້ນຄົງຈາກການອອກອາກາດໂທລະພາບແບບດີຈິຕອນ.
- ການຮັບສັນຍານໂທລະພາບສາມາດໄດ້ຮັບຜົນກະທົບຈາກປັດໃຈຕ່າງໆເຊັ່ນວ່າສະພາບທີ່ຕັ້ງ, ຕົ້ນໄມ້, ອາຄານ, ພູມອາກາດ (ຝົນຕົກ, ລົມພັດ, ຄວາມຊື້ນ), ແລະ ອຸປະກອນທີ່ເປ່ເພ້/ເຊື່ອມສະພາບ. ປົກກະຕິແລ້ວການຮັບສັນຍານພາບດີຈິຕອນສາມາດໄດ້ຮັບການປັບປຸງດີຂຶ້ນ ພຽງແຕ່ໂດຍການຍ້າຍທີ່ຕັ້ງຂອງຫູ້ກຮັບສັນຍານອັງແຕນເທົ່ານັ້ນ. ຍ້າຍອັງແຕນອອກຫ່າງຈາກວັດຖຸ ແລະ ໂຄງສ້າງອື່ນໆ, ຫຼື ການວາງມັນຢູ່ບ່ອນສູງກວ່າມັກຈະສາມາດເຮັດໃຫ້ການຮັບສັນຍານພາບດີຂຶ້ນ.
- ຫຼາຍໆຫູ້ກອັງແຕນແມ່ນຈໍາເປັນຕ້ອງອ່ອຍທິດໃສ່ ຫຼື ຫັນໃສ່ທິດທາງໃດໜຶ່ງເພື່ອໃຫ້ໄດ້ຮັບສັນຍານດີທີ່ສຸດຈາກສະຖານີທີ່ຕົນຕ້ອງການ. ສໍາລັບຫູ້ກອັງແຕນທີ່ຢູ່ໃນເຮືອນ, ທ່ານອາດຈະຈໍາເປັນເຮັດສິ່ງດັ່ງກ່າວດ້ວຍມືໂດຍການລອງປັບໄປປັບມາຈົນໄດ້ຕໍາແໜ່ງທີ່ດີສຸດ. ສໍາລັບຫູ້ກອັງແຕນຢູ່ນອກເຮືອນ, ເຄື່ອງປິ່ນທີ່ໃຊ້ກໍານົດທິດທາງໃຫ້ຫູ້ກອັງແຕນສາມາດຊ່ວຍຊອກຫາຕໍາແໜ່ງຮັບສັນຍານທີ່ດີສຸດໄດ້, ໂດຍສະເພາະເມື່ອພະຍາຍາມຮັບສັນຍານຈາກສະຖານີຕ່າງໆທີ່ສົ່ງສັນຍານຈາກສະຖານທີ່ແຕກຕ່າງກັນ.
- ສະຖານີໂທລະພາບທີ່ອອກອາກາດໃນແບບດີຈິຕອນ ນໍາໃຊ້ທັງແຖບຄື້ນ VHF (ຊ່ອງ 2-13) ແລະ ແຖບຄື້ນ UHF (ຊ່ອງ 14-51). ຫຼາຍໆອັງແຕນໃນເຮືອນ ໃຊ້ຫູ້ກຮັບສັນຍານ "ຫູກະຕ່າຍ" ສໍາລັບຄື້ນສັນຍານ VHF ແລະ ອັງແຕນ "ຮູບວົງກົມ" ຫຼື "ຄັນທະນູ" ສໍາລັບຄື້ນສັນຍານ UHF. ຈົ່ງຮັບປະກັນວ່າທ່ານນໍາໃຊ້ອັງແຕນທີ່ຮັບສັນຍານໄດ້ທັງແຖບຄື້ນ VHF ແລະ UHF ແລະ ໄດ້ຕິດຕັ້ງມັນຢ່າງຖືກຕ້ອງ.
- ອັງແຕນໃນເຮືອນແບບງ່າຍດາຍ, ເຊັ່ນວ່າຫູ້ກອັງແຕນຫູກະຕ່າຍ, ໃຫ້ຄວາມສາມາດຮັບສັນຍານພາບຕໍ່າສຸດທີ່ອາດຈະເໝາະສົມ ຫຼື ອາດຈະບໍ່ເໝາະສົມສໍາລັບສະຖານທີ່ຂອງທ່ານ. ຖ້າທ່ານບໍ່ສາມາດໄດ້ຮັບສັນຍານພາບຢ່າງໜ້າພໍໃຈຈາກຫູ້ກອັງແຕນໃນເຮືອນທີ່ມີຢູ່ຂອງທ່ານ, ທ່ານອາດຈະຕ້ອງການມີຫູ້ກອັງແຕນໃນເຮືອນໃໝ່ຊະນິດທີ່ປະກອບມີຄຸນສົມບັດສໍາລັບການຮັບສັນຍານພາບຄື້ນ UHF ໄດ້ດີກວ່າ ແລະ/ຫຼື ອຸປະກອນຂະຫຍາຍສັນຍານພາບເພື່ອຂະຫຍາຍສັນຍານພາບທີ່ໄດ້ຮັບ (ມັກຈະຮູ້ກັນດີໃນນາມອັງແຕນໃນເຮືອນຊະນິດແອັກທີບ).
- ໂດຍທົ່ວໄປແລ້ວ, ອັງແຕນນອກເຮືອນຈະສາມາດຮັບສັນຍານໄດ້ດີກວ່າອັງແຕນໃນເຮືອນ. ຖ້າທ່ານມີອັງແຕນນອກ

ເຮືອນແລ້ວ ແລະ ກໍ່ໄດ້ຮັບສັນຍານທີ່ມີຄຸນນະພາບດີຈາກຊ່ອງສັນຍານ VHF ແລະ UHF, ອັງແຕນດັ່ງກ່າວຂອງທ່ານກໍ່ຄວນຈະຮັບສັນຍານໄດ້ດີເຊັ່ນກັນກັບໂທລະພາບດິຈິຕອນ.

- ປະສິດທິພາບການຮັບສັນຍານຂອງອັງແຕນນອກເຮືອນສາມາດຫຼຸດຜ່ອນລົງໃນໄລຍະຍາວ ເນື່ອງຈາກການສຳຜັດໂດຍກົງກັບສະພາບອາກາດ. ຖ້າທ່ານມີບັນຫາດັ່ງກ່າວ, ໃຫ້ກວດເບິ່ງສາຍອາກາດທີ່ຫຼົມ ຫຼື ເປັນສະໜິມຜຸພັງ, ແຜງອັງແຕນທີ່ເປ່ເພ້ ແລະ ກວດເບິ່ງວ່າອັງແຕນໄດ້ປິ່ນໃສ່ທິດທາງທີ່ຖືກຕ້ອງແລ້ວບໍ.
- ພະຍາຍາມຮັກສາຄວາມຍາວຂອງສາຍອາກາດລະຫວ່າງຫຼັກອັງແຕນ ກັບຕົວຮັບສັນຍານດິຈິຕອນໃຫ້ສັ້ນທີ່ສຸດເທົ່າທີ່ເຮັດໄດ້ ເພື່ອໃຫ້ຮັບສັນຍານໄດ້ດີທີ່ສຸດ.
- ທ່ານສາມາດນຳໃຊ້ອັງແຕນດ່ຽວເພື່ອສະໜອງສັນຍານພາບດິຈິຕອນໃຫ້ໂທລະພາບຫຼາຍໆໜ່ວຍໃນເຮືອນຂອງທ່ານ. ແນວໃດກໍ່ດີ, ໃຫ້ຈື່ວ່າໂທລະພາບແບບທຳມະດາແຕ່ລະໜ່ວຍທີ່ເຊື່ອມຕໍ່ກັບຫຼັກອັງແຕນຂອງທ່ານຈະຕ້ອງການເຄື່ອງປ່ຽນສັນຍານພາບດິຈິຕອນເປັນສັນຍານພາບທຳມະດາຂອງໃຜຂອງມັນເພື່ອເບິ່ງລາຍການອອກອາກາດດິຈິຕອນ.
- "ຕົວແບ່ງສະປິດເຕີ" ທີ່ໃຊ້ເພື່ອເຊື່ອມຕໍ່ຫຼັກອັງແຕນດ່ຽວ ໃສ່ກັບໂທລະພາບຫຼາຍໆໜ່ວຍ ຈະຫຼຸດປະລິມານສັນຍານທີ່ມີຕໍ່ກັບແຕ່ລະໜ່ວຍ. ຖ້າທ່ານມີບັນຫາດັ່ງກ່າວ, ໃຫ້ກວດເບິ່ງວ່າສັນຍານດີຂຶ້ນຫຼືບໍ່ໂດຍບໍ່ມີຕົວສະປິດເຕີ. ໃນບາງກໍລະນີ ສະປິດເຕີຊະນິດ "ແອັກທິບ" ທີ່ປະກອບມີຕົວຂະຫຍາຍສັນຍານຈະສາມາດແກ້ໄຂບັນຫານີ້ໄດ້.
- ຖ້າທ່ານຢູ່ໃກ້ຫໍອອກອາກາດຂອງສະຖານີ, ການຮັບສັນຍານຈາກສະຖານີດັ່ງກ່າວ, ເຊັ່ນກັນກັບສະຖານີອື່ນໆ, ສາມາດຖືກສະກັດກັ້ນ ຈາກສັນຍານ "ແຮງເກີນຂະໜາດ". ໃຫ້ພິຈາລະນານຳໃຊ້ "ອຸປະກອນຜ່ອນສັນຍານ" ຫຼື ເອົາອຸປະກອນຂະຫຍາຍສັນຍານອອກ ເພື່ອປັບປຸງການໄດ້ຮັບສັນຍານໃຫ້ດີຂຶ້ນ.
- ຖ້າທ່ານຕັດສິນໃຈປ່ຽນໃໝ່ ຫຼື ຍົກລະດັບອັງແຕນນອກເຮືອນຂອງທ່ານ, ເວັບໄຊເຊັ່ນວ່າ www.antennaweb.org ໃຫ້ຂໍ້ມູນກ່ຽວກັບທີ່ຕັ້ງຂອງຫໍອອກອາກາດ ແລະ ປະເພດຫຼັກອັງແຕນນອກເຮືອນທີ່ເໝາະສົມກັບສະຖານີທີ່ທ່ານຕ້ອງການໄດ້ຮັບສັນຍານ. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການຍົກລະດັບລະບົບຮັບສັນຍານອັງແຕນຂອງທ່ານ, ໃຫ້ພົວພັນນຳຜູ້ຈຳໜ່າຍອັງແຕນລາຍຍ່ອຍ ຫຼື ຜູ້ຕິດຕັ້ງອັງແຕນພາຍໃນເຂດທ້ອງຖິ່ນທ່ານ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຫັນປ່ຽນເປັນໂທລະພາບດິຈິຕອນ, ໃຫ້ເບິ່ງໃນເວັດໄຊ www.dtv.gov ຫຼືຕິດຕໍ່ຫາ FCC ຕາມອີເມວທີ່ dtvinfo@fcc.gov; ໂທລະສັບທີ່ໝາຍເລກ 1-888-ຕໍ່ສາຍ-FCC (1-888-225-5322) ສຳລັບຄົນທົ່ວໄປ ຫຼື 1-888-ໂທຫາ-FCC (1-888-835-5322) ສຳລັບຄົນຫູໜວກ; ແຟັກ 1-866-418-0232; ຫຼື ຂຽນໜັງສືສົ່ງຫາ:

ຄະນະກຳມາທິການການສື່ສານລັດຖະບານກາງ
ສຳນັກງານຝ່າຍຜູ້ບໍລິໂພກ & ກິດຈະການລັດຖະບານ
ພະແນກສອບຖາມຂໍ້ມູນ ແລະ ການຮ້ອງຮຽນຂອງຜູ້ບໍລິໂພກ
ຖະໜົນ 445 12th Street, SW
Washington, DC 20554

###

*ສຳລັບຂໍ້ມູນເຜີຍແຜ່ກ່ຽວກັບຜູ້ບໍລິໂພກນີ້ ຫຼື ອື່ນໆໃນຮ່າງແບບທີ່ເຂົ້າເບິ່ງໄດ້ (ບົດຂຽນແບບອີເລັກໂທຣນິກ ASCII text, Braille, ເອກະສານພິມຕົວໃຫຍ່, ຫຼື ສຽງບັນທຶກ)ກະລະນຸ ຂຽນໜັງສື ຫຼື ໂທຫາພວກເຮົາໄດ້ຕາມທີ່ຢູ່ ຫຼື ເລກໂທລະສັບລຸ່ມນີ້, ຫຼືສົ່ງອີເມວຫາ* ***FCC504@fcc.gov***.

ເພື່ອໄດ້ຮັບຂໍ້ມູນກ່ຽວກັບຫົວຂໍ້ຜູ້ບໍລິໂພກນີ້ ແລະ ອື່ນໆຈາກ FCC ຜ່ານບໍລິການສັ່ງຈອງທາງເອເລັກໂທຣນິກ, ໃຫ້ຄລິກເຂົ້າທີ່
***http://www.fcc.gov/cgb/contacts/***

*ເອກະສານນີ້ແມ່ນເພື່ອໃຫ້ຂໍ້ມູນຄວາມຮູ້ແກ່ຜູ້ບໍລິໂພກເທົ່ານັ້ນ ແລະ ບໍ່ມີເຈດຕະນາສົ່ງຜົນກະທົບຕໍ່ກັບການໄຕ່ສວນ ຫຼື ຄະດີຕ່າງໆ ທີ່ພົວພັນກັບຫົວຂໍ້ນີ້ ຫຼື ປະເດັນຕ່າງໆທີ່ກ່ຽວຂ້ອງ.*